ສະຫະພາບ ເອີຣົບ
European Union

unicef
ເພື່ອເດັກທຸກໆຄົນ

ບົດສະເໜີນະໂຍບາຍ ດ້ານໂພຊະນາການໂດຍສັງເຂບ

ຄວາມສຳຄັນຂອງຄວາມຫຼາກຫຼາຍ ຂອງການຜະລິດສະບຽງອາຫານ ແບບກຸ້ມຕົນເອງ ແລະ ການຄ້ຳປະກັນ ສະບຽງອາຫານຂອງຄົວເຮືອນ ສຳລັບ ຄວາມຫຼາກຫຼາຍດ້ານອາຫານຂອງ ແມ່ຍິງ ແລະ ເດັກນ້ອຍ

ມິຖຸນາ 2024

ມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບບົດບາດຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານແບບກຸ້ມຕົນເອງ ແລະ ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນໃນຄວາມຫຼາກຫຼາຍດ້ານອາຫານຂອງແມ່ຍິງ ແລະ ເດັກນ້ອຍ ເປັນສິ່ງສຳຄັນຫຼາຍເພື່ອຊ່ວຍໃນການແນະນຳ ຫຼື ປັບປຸງຕໍ່ການຕັດສິນໃຈກ່ຽວກັບ ນະໂຍບາຍ ແລະ ແຜນງານດ້ານໂພຊະນາການ ໃນ ສປປ ລາວ.

ບົດສະເໜີນະໂຍບາຍໂດຍສັງເຂບສະບັບນີ້ ສະແດງໃຫ້ເຫັນຜົນໄດ້ຮັບຂອງການຄົ້ນຄວ້າກ່ຽວກັບ ກະສິກຳແບບກຸ້ມຕົນເອງ, ການຄ້ຳປະກັນສະບຽງອາຫານຂອງຄອບຄົວ ແລະ ຄວາມຫຼາກຫຼາຍດ້ານອາຫານຂອງແມ່ຍິງ ແລະ ເດັກນ້ອຍ ຢູ່ ສປປ ລາວ. ການວິເຄາະດັ່ງກ່າວ ໄດ້ດຳເນີນການໂດຍ ສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດ-ສັງຄົມ (ສຄນສ) ທີ່ຂຶ້ນກັບ ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ (ສວສສຊ), ໂດຍໄດ້ຮັບການສະໜັບສະໜູນຈາກ ສະຫະພາບເອີຣົບ (EU) ແລະ ອົງການສະຫະປະຊາຊາດສຳລັບເດັກ (UNICEF).

ບັນຫາທີ່ຕັ້ງຂຶ້ນ?

ບັນດາກຸ່ມກິດຈະກຳດ້ານໂພຊະນາການທາງອ້ອມໄດ້ຖືກລະບຸວ່າ ເປັນເຄື່ອງມືທີ່ເອື້ອອຳນວຍໃນການເລັ່ງເພື່ອໃຫ້ບັນລຸຜົນສຳເລັດດ້ານການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ທີ່ປະກອບສ່ວນເຂົ້າໃນເປົ້າໝາຍທີ 2 ຂອງການພັດທະນາແບບຍືນຍົງ (SDG-2).[1] ມີຫຼາຍຊ່ອງທາງ ທີ່ເລີ່ມຈາກວຽກງານກະສິກຳ ໄປສູ່ໂພຊະນາການ. ໃນນັ້ນ, ການເຊື່ອມໂຍງລະຫວ່າງ ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານແບບກຸ້ມຕົນເອງ, ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ແລະ ຄວາມຫຼາກຫຼາຍທາງດ້ານອາຫານ ຖືວ່າເປັນປະເດັນສຳຄັນຂອງການຄົ້ນຄວ້າໃນທົດສະວັດທີ່ຜ່ານມາ.[2] ເຖິງຢ່າງໃດກໍຕາມ, ການວິເຄາະເມຕາ (Meta-Analysis) ທີ່ຜ່ານມາຂອງການສຶກສາ 45 ບົດຄົ້ນຄວ້າ ຈາກ 26 ປະເທດ ເຫັນວ່າມີຫຼັກຖານພຽງຈຳນວນໜ້ອຍທີ່ສະແດງໃຫ້ເຫັນວ່າ ການຜະລິດທີ່ມີຄວາມຫຼາກຫຼາຍມີຜົນກະທົບທີ່ມີຄວາມໝາຍ ຕໍ່ຄວາມຫຼາກຫຼາຍຂອງອາຫານ ແລະ ການຄ້ຳປະກັນສະບຽງອາຫານ. ຖ້າເປັນເຊັ່ນນັ້ນ ການສົ່ງຜົນກະທົບດັ່ງກ່າວນີ້ແມ່ນມີໜ້ອຍຫຼາຍ.[3]

ຢູ່ ສປປ ລາວ, ມີຫຼັກຖານຈຳນວນໜ້ອຍ ຫຼື ບໍ່ມີຫຼັກຖານໃດທີ່ສະແດງເຖິງຄວາມສຳພັນລະຫວ່າງ ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານ ແລະ ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ແລະ ຄວາມຫຼາກຫຼາຍທາງດ້ານອາຫານ, ເຖິງວ່າລັດຖະບານແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ ໄດ້ໃຫ້ບູລິມະສິດທາງດ້ານກະສິກຳເພື່ອໂພຊະນາການ. ສະນັ້ນ, ການຄົ້ນຄວ້າເຖິງຄວາມສຳພັນລະຫວ່າງ ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານແບບກຸ້ມຕົນເອງ, ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ແລະ ຄວາມຫຼາກຫຼາຍທາງດ້ານອາຫານ ຈຶ່ງມີຄວາມຈຳເປັນໃນສະພາບການປັດຈຸບັນ.

ວິທີການຄົ້ນຄວ້າ

ບົດສະເໜີນະໂຍບາຍດ້ານໂພຊະນາການໂດຍສັງເຂບສະບັບນີ້ແມ່ນ ເພື່ອຕອບຄຳຖາມຄົ້ນຄ້ວາ 2 ປະການຄື: (i) ມີຄວາມສຳພັນລະຫວ່າງ ປະລິມານຕ່ຳສຸດໃນຄວາມຫຼາກຫຼາຍຂອງອາຫານສຳລັບແມ່ຍິງ (MDD-W) ແລະ ປະລິມານຕ່ຳສຸດໃນຄວາມຫຼາກຫຼາຍຂອງອາຫານສຳລັບເດັກນ້ອຍ (MDD) ຕໍ່ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ຫຼື ບໍ່, ແລະ (ii) ມີຄວາມສຳພັນລະຫວ່າງ MDD-W ແລະ MDD ຂອງເດັກນ້ອຍ ຕໍ່ກັບຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານໃນຄົວເຮືອນ ຫຼື ບໍ່?

ເພື່ອບັນລຸເປົ້າໝາຍຂອງການຄົ້ນຄວ້າຄັ້ງນີ້, ການສຶກສາໄດ້ນຳໃຊ້ຂໍ້ມູນຈາກ ການສຳຫຼວດເຝົ້າລະວັງແຫ່ງຊາດດ້ານໂພຊະນາການ (NSS) ຄັ້ງລ່າສຸດໃນ ສປປ ລາວ ທີ່ໄດ້ດຳເນີນໂດຍ ສູນໂພຊະນາການ, ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ແລະ ອົງການສະຫະປະຊາຊາດສຳລັບເດັກ (UNICEF) ປະຈຳ ສປປ ລາວ ລະຫວ່າງ ເດືອນຕຸລາ ເຖິງ ເດືອນພະຈິກ 2023. ເດັກນ້ອຍໄດ້ຮັບປະລິມານຕ່ຳສຸດໃນຄວາມຫຼາກຫຼາຍຂອງອາຫານ (MDD) ຖ້າພວກເຂົາໄດ້ບໍລິໂພກກຸ່ມອາຫານຫຼັກຢ່າງໜ້ອຍຈາກ 5 ກຸ່ມ ໃນ 8 ກຸ່ມໃນມື້ທີ່ຜ່ານມາ. ແມ່ຍິງໄວຈະເລີນພັນໄດ້ຮັບປະລິມານຕ່ຳສຸດຄວາມຫຼາກຫຼາຍຂອງອາຫານ (MDD-W) ຖ້າພວກເຂົາໄດ້ບໍລິໂພກອາຫານຫຼັກຢ່າງໜ້ອຍຈາກ 5 ກຸ່ມ ໃນ 10 ກຸ່ມ ໃນມື້ທີ່ຜ່ານມາ. ຄະແນນການບໍລິໂພກອາຫານ (FCS) ຖືກນຳໃຊ້ເປັນຕົວແທນຂອງການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ. ຖ້າ FCS ໜ້ອຍກວ່າ 35 ຄະແນນ, ຈະຊີ້ບອກວ່າບໍ່ມີການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ. ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານ ແມ່ນໄດ້ຄິດໄລ່ຈາກ ຈຳນວນກຸ່ມອາຫານທີ່ຜະລິດໂດຍແຕ່ລະຄົວເຮືອນ.

ການສຶກສາຄັ້ງນີ້ ໄດ້ວິເຄາະຂໍ້ມູນກ່ຽວກັບ ແມ່ຍິງໄວຈະເລີນພັນ (ອາຍຸ 15-49 ປີ) ແລະ ເດັກນ້ອຍ ທີ່ມີອາຍຸ 6-23 ເດືອນເທົ່ານັ້ນ. ລວມທັງໝົດມີ 611 ຄົນຢູ່ໃນຊຸດຂໍ້ມູນທີ່ໄດ້ຮັບການວິເຄາະ ພາຍຫຼັງທີ່ໄດ້ຄັດເລືອກກັ່ນຕອງຂໍ້ມູນທີ່ສົມບູນແລ້ວ, ເຊິ່ງບໍ່ໄດ້ລວມເອົາຂໍ້ມູນຕົວແປທີ່ບໍ່ສົມບູນເຊັ່ນ: ຂໍ້ມູນທີ່ບໍ່ຄົບຖ້ວນຂອງ MDD, MDD-W, ຄະແນນການບໍລິໂພກອາຫານ, ການຜະລິດສະບຽງອາຫານຂອງຄົວເຮືອນ, ປະຊາກອນ ແລະ ສະຖານະພາບດ້ານເສດຖະກິດ-ສັງຄົມ. ການວິເຄາະສົມຜົນຖົດຖອຍໂລຈິສຕິກ ໄດ້ຖືກນຳໃຊ້ເພື່ອປະເມີນຄວາມສຳພັນລະຫວ່າງ MDD ແລະ MDD-W ກັບການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ແລະ ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານແບບກຸ້ມຕົນເອງ.

[1] Ruel & Alderman, 2013.

[2] Dizon et al., 2021.

[3] Sibhatu & Qaim, 2018.

ຜົນໄດ້ຮັບຈາກການຄົ້ນຄວ້າທີ່ສຳຄັນ

ອີງຕາມການວິເຄາະ (ຕາຕະລາງ 1), ອັດຕາສ່ວນຂອງເດັກນ້ອຍທີ່ໄດ້ຮັບ MDD ແມ່ນ 52.4% ແລະ ຂອງແມ່ຍິງທີ່ໄດ້ຮັບ MDD-W ແມ່ນ 75.3%, ບັນດາຄົວເຮືອນສ່ວນໃຫຍ່ມາຈາກພາກກາງ (42.2%), ພາກເໜືອ (37.3%) ແລະ ພາກໃຕ້ (20.5%). ຫຼາຍກວ່າ 3 ໃນ 4 (78.2%) ຂອງຄົວເຮືອນປະກອບດ້ວຍ 4 ຫາ 8 ຄົນ. ປະມານ 40.1% ຂອງແມ່ຍິງຮຽນຈົບແຕ່ຊັ້ນປະຖົມສຶກສາລົງມາ, ຈົບຊັ້ນມັດທະຍົມສຶກສາ (48.9%) ແລະ 11.0% ແມ່ນຈົບຊາຊີບ/ມະຫາວິທະຍາໄລ. ເດັກນ້ອຍອາຍຸລະຫວ່າງ 6-11 ເດືອນ ກວມເອົາ 40.6% ແລະ ໄດ້ກິນນົມແມ່ໃນປັດຈຸບັນເຖິງ 67.8%.

ຄົວເຮືອນສ່ວນໃຫຍ່ໄດ້ເກັບກ່ຽວ ຫຼື ເປັນເຈົ້າຂອງ ສະເລ່ຍແລ້ວແມ່ນໃນກຸ່ມອາຫານ 3 ກຸ່ມຂຶ້ນໄປ (3.42 ± 0.06) (ຕາຕະລາງ 1), ສ່ວນໃຫ່ຍແມ່ນປະເພດທັນຍາພືດ, ຮາກ, ຫົວ (ພືດ) ແລະ ປະເພດຫາດແປ້ງ (83.3%), ສັດລ້ຽງຂະໜາດນ້ອຍ (79.5%) ແລະ ພືດຜັກ (69.1%). ອີງຕາມຄະແນນການບໍລິໂພກອາຫານ (FCS), ປະມານ 1 ໃນ 10 (10.6%) ຂອງຄົວເຮືອນມີຄະແນນການບໍລິໂພກອາຫານທີ່ບໍ່ສາມາດຍອມຮັບໄດ້.

ຕາຕະລາງ 1: ຄຸນລັກສະນະພື້ນຖານຂອງແມ່ຍິງ ແລະ ເດັກນ້ອຍ ອາຍຸ 6-23 ເດືອນ ແລະ ອັດຕາສ່ວນຄວາມຫຼາກຫຼາຍດ້ານອາຫານ (ການສຳຫຼວດເຝົ້າລະວັງແຫ່ງຊາດດ້ານໂພຊະນາການ ຮອບ 2 ປີ 2023)

ຄຸນລັກສະນະພື້ນຖານ	ຄວາມຖີ່ (%)	ຄວາມຫຼາກຫຼາຍຂອງອາຫານຕ່ຳສຸດຂອງເດັກ %, (95% CI)	p-value[1]	ຄວາມຫຼາກຫຼາຍຂອງອາຫານຕ່ຳສຸດຂອງແມ່ຍິງ %, (95% CI)	p-value[1]
ລວມ	611 (100)	52.4 (48.4-56.3)		75.3 (71.7-78.5)	
ພາກພື້ນ/ຂົງເຂດ					
ພາກກາງ	258 (42.2)	50.4 (44.3-56.4)	0.67	70.9 (65.1-76.1)	0.10
ພາກເໜືອ	228 (37.3)	54.4 (47.9-60.7)		78.5 (72.7-83.3)	
ພາກໃຕ້	125 (20.5)	52.8 (44.1-61.3)		78.4 (70.4-84.7)	
ການສຶກສາຂອງແມ່					
ຊັ້ນປະຖົມສຶກສາລົງມາ	245 (40.1)	42.0 (36.0-48.3)	< 0.001	65.5 (58.3-70.2)	< 0.001
ຊັ້ນມັດທະຍົມສຶກສາ	299 (48.9)	56.5 (50.9-62.0)		80.9 (76.1-85.0)	
ວິຊາຊີບ/ມະຫາວິທະຍາໄລ	67 (11.0)	71.6 (59.9-81.0)		89.6 (80.0-94.5)	
ຂະໜາດຂອງຄົວເຮືອນ					
2-3 ຄົນ	51 (8.3)	52.9 (39.5-65.9)	0.99	80.4 (67.5-89.0)	0.63
4-8 ຄົນ	478 (78.2)	52.3 (47.8-56.7)		75.1 (71.0-78.8)	
9 ຄົນຂຶ້ນໄປ	82 (13.4)	52.4 (41.8-62.9)		73.1 (62.7-81.6)	
ອາຍຸເປັນເດືອນ					
6-11	248 (40.6)	50.0 (43.8-56.1)	0.46	-	-
12-17	197 (32.2)	55.8 (48.9-62.6)		-	-
18-23	166 (27.2)	51.8 (44.2-59.3)		-	-
ໄດ້ກິນນ້ຳນົມແມ່ໃນປັດຈຸບັນ					
ແມ່ນ	414 (67.8)	55.8 (50.9-60.5)	0.02	-	-
ບໍ່ແມ່ນ	197 (32.2)	45.2 (38.4-52.1)		-	-
ເພດ					
ຊາຍ	307 (50.2)	53.1 (47.5-58.6)	0.78	-	-
ຍິງ	304 (49.8)	51.6 (46.0-57.2)		-	-

ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານ					
ກຸ່ມອາຫານສະເລ່ຍ		3.42 ± 0.06		3.42 ± 0.06	
2 ກຸ່ມລົງມາ	181 (29.6)	44.2 (37.2-51.5)	< 0.001	68.5 (61.4-74.8)	< 0.001
3 ເຖິງ 4 ກຸ່ມ	245 (40.1)	47.7 (41.6-53.9)		72.6 (66.7-77.8)	
5 ກຸ່ມຂຶ້ນໄປ	185 (30.3)	66.5 (59.4-72.9)		85.4 (79.6-89.8)	
ພືດຕະກູນ: ທັນຍາພືດ, ຮາກ, ຫົວ (ພືດ) ແລະ ປະເພດອື່ນໆ					
ແມ່ນ	509 (83.3)	51.7 (47.3-56.0)	0.50	74.8 (70.1-78.4)	0.67
ບໍ່ແມ່ນ	102 (16.7)	55.9 (46.2-65.1)		77.4 (68.4-84.5)	
ພືດຕະກູນຖົ່ວ					
ແມ່ນ	212 (34.7)	65.6 (58.9-71.6)	< 0.001	86.3 (81.0-90.3)	< 0.001
ບໍ່ແມ່ນ	399 (65.3)	45.4 (40.5-50.3)		69.4 (64.7-73.7)	
ພືດຜັກ					
ແມ່ນ	422 (69.1)	55.2 (50.4-59.9)	0.04	77.0 (72.8-80.8)	0.16
ບໍ່ແມ່ນ	189 (30.9)	46.0 (39.1-53.1)		71.4 (64.6-77.4)	
ໝາກໄມ້					
ແມ່ນ	309 (50.6)	61.2 (55.6-66.4)	< 0.001	83.8 (79.3-87.5)	< 0.001
ບໍ່ແມ່ນ	302 (49.4)	43.4 (38.0-49.0)		66.6 (61.1-71.6)	
ລ້ຽງສັດຂະໜາດນ້ອຍ					
ແມ່ນ	486 (79.5)	53.7 (49.3-58.1)	0.23	75.9 (71.9-79.5)	0.54
ບໍ່ແມ່ນ	125 (20.5)	47.2 (38.7-55.6)		72.8 (64.4-79.8)	
ລ້ຽງປາ					
ແມ່ນ	154 (25.2)	61.7 (53.8-69.0)	0.009	79.9 (72.8-85.4)	0.15
ບໍ່ແມ່ນ	457 (74.8)	49.2 (44.7-53.8)		73.7 (69.5-77.6)	
ຄະແນນການບໍລິໂພກອາຫານ					
ບໍ່ສາມາດຍອມຮັບໄດ້	65 (10.6)	27.7 (18.3-39.6)	< 0.001	43.1 (31.8-55.2)	< 0.001
ສາມາດຍອມຮັບໄດ້	546 (89.4)	55.3 (51.1-59.4)		79.1 (75.5-82.3)	

ແຫ່ງຂໍ້ມູນ: ການສຳຫຼວດເຝົ້າລະວັງແຫ່ງຊາດດ້ານໂພຊະນາການ ຮອບ 2 ປີ 2023. ການຄິດໄລ່ຂອງຜູ້ວິເຄາະ.

ໝາຍເຫດ: [1]ສະຖິຕິການທົດສອບ Chi-square.

ສິ່ງທີ່ໜ້າສົນໃຈ ໃນການວິເຄາະຄັ້ງນີ້ໄດ້ລະບຸໃຫ້ເຫັນເຖິງຄວາມສຳພັນທາງບວກທີ່ສຳຄັນລະຫວ່າງ ຄົວເຮືອນທີ່ມີຄະແນນການບໍລິໂພກອາຫານທີ່ສາມາດຍອມຮັບໄດ້ ແລະ ການບັນລຸປະລິມານຕ່ຳສຸດຄວາມຫຼາກຫຼາຍຂອງອາຫານສຳລັບເດັກນ້ອຍ (MDD) ທຽບກັບເດັກນ້ອຍທີ່ມີຄະແນນການບໍລິໂພກອາຫານທີ່ບໍ່ສາມາດຍອມຮັບໄດ້ (ເບິ່ງຕາຕະລາງ 2 ສຳລັບລາຍລະອຽດຂອງຜົນໄດ້ຮັບ). ເດັກນ້ອຍທີ່ມາຈາກຄົວເຮືອນທີ່ມີຄະແນນການບໍລິໂພກອາຫານທີ່ສາມາດຍອມຮັບໄດ້ ມີໂອກາດທີ່ຈະໄດ້ຮັບ MDD ສູງກວ່າ ເດັກນ້ອຍທີ່ມີຄະແນນການບໍລິໂພກອາຫານທີ່ບໍ່ສາມາດຍອມຮັບໄດ້ ປະມານ 3.0 ເທົ່າ. ນອກຈາກນີ້, ການສຶກສາຍັງໄດ້ພົບເຫັນມີຄວາມສຳພັນທາງບວກລະຫວ່າງ ຄວາມຫຼາກຫຼາຍດ້ານອາຫານສຳລັບເດັກນ້ອຍ ແລະ ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານຂອງຄົວເຮືອນ. ເດັກນ້ອຍທີ່ມາຈາກຄົວເຮືອນທີ່ຜະລິດອາຫານ 5 ກຸ່ມຂຶ້ນໄປນັ້ນ ມີຄວາມເປັນໄປໄດ້ທີ່ຈະບັນລຸ MDD ສູງກວ່າ ເດັກນ້ອຍທີ່ຄົວເຮືອນຜະລິດອາຫານ 2 ກຸ່ມລົງມາ ປະມານ 2.0 ເທົ່າ.

ຕາຕະລາງ 2: ການວິເຄາະສົມຜົນຖົດຖອຍໂລຈິສຕິກ ແບບຫຼາຍຕົວປ່ຽນ ຂອງມີຄວາມສຳພັນລະຫວ່າງ ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ, ຄວາມຫຼາກຫຼາຍຂອງການຜະລິດດ້ານກະສິກຳ ແລະ ປະລິມານຕ່ຳສຸດຄວາມຫຼາກຫຼາຍຂອງອາຫານສຳລັບເດັກນ້ອຍອາຍຸ 6 ເຖິງ 23 ເດືອນ (MDD)

			ແບບຈຳລອງ A		***ແບບຈຳລອງ B[1]***	
	ຄວາມຖີ່ (%)	***MDD %, (95% CI)***	***OR (95% CI)***	***P***	***OR (95% CI)***	***P***
ຄະແນນການບໍລິໂພກອາຫານ (FCS)						
ບໍ່ສາມາດຍອມຮັບໄດ້	65 (10.6)	27.7 (18.3-39.6)	ອ້າງອີງ		ອ້າງອີງ	
ສາມາດຍອມຮັບໄດ້	546 (89.4)	55.3 (51.1-59.4)	3.23 (1.86-5.84)	0.001	2.85 (1.61-5.23)	0.001
ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານ						
2 ກຸ່ມລົງມາ	181 (29.6)	44.2 (37.2-51.5)	*ອ້າງອີງ*		*ອ້າງອີງ*	
3 ເຖິງ 4 ກຸ່ມ	245 (40.1)	47.7 (41.6-53.9)	1.15 (0.78-1.70)	*0.47*	1.09(0.74-1.63)	*0.64*
5 ກຸ່ມຂຶ້ນໄປ	185 (30.3)	66.5 (59.4-72.9)	2.50 (1.64-3.84)	0.001	2.27 (1.47-3.53)	0.001

ແຫຼ່ງຂໍ້ມູນ: ການສຳຫຼວດເຝົ້າລະວັງແຫ່ງຊາດດ້ານໂພຊະນາການ ຮອບ 2 ປີ 2023. ການຄິດໄລ່ຂອງຜູ້ວິເຄາະ.

ໝາຍເຫດ: [1] ປັບຕົວກັບ ການສຶກສາຂອງແມ່ ແລະ ໄດ້ກິນນ້ຳນົມແມ່ໃນປັດຈຸບັນ.

ໄດ້ພົບວ່າມີຜົນໄດ້ຮັບທີ່ຄ້າຍຄືກັນ ໃນກຸ່ມແມ່ຍິງ (ເບິ່ງຕາຕະລາງ 3). ແມ່ຍິງຢູ່ໃນຄົວເຮືອນທີ່ມີຄະແນນການບໍລິໂພກອາຫານທີ່ສາມາດຍອມຮັບໄດ້ ມີໂອກາດທີ່ຈະໄດ້ຮັບ MDD-W ສູງກວ່າ ແມ່ຍິງທີ່ມີຄະແນນການບໍລິໂພກອາຫານທີ່ບໍ່ສາມາດຍອມຮັບໄດ້ ປະມານ 5.0 ເທົ່າ. ແມ່ຍິງທີ່ມາຈາກຄົວເຮືອນທີ່ຜະລິດອາຫານ 5 ກຸ່ມຂຶ້ນໄປ ມີໂອກາດຈະໄດ້ຮັບ MDD-W ສູງກວ່າ ແມ່ຍິງທີ່ຄົວເຮືອນຜະລິດອາຫານ 2 ກຸ່ມລົງມາ ປະມານ 2.0 ເທົ່າ.

ຕາຕະລາງ 3: ການວິເຄາະສົມຜົນຖົດຖອຍໂລຈິສຕິກ ແບບຫຼາຍຕົວປ່ຽນ ຂອງມີຄວາມສຳພັນລະຫວ່າງ ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ, ຄວາມຫຼາກຫຼາຍຂອງການຜະລິດດ້ານກະສິກຳ ແລະ ປະລິມານຕ່ຳສຸດຄວາມຫຼາກຫຼາຍຂອງອາຫານ (MDD-W) ຂອງແມ່ຍິງໄວຈະເລີນພັນ

			ແບບຈຳລອງ A		***ແບບຈຳລອງ B[1]***	
	ຄວາມຖີ່ (%)	**MDD-W %, (95% CI)**	**OR (95% CI)**	**P**	**OR (95% CI)**	**P**
ຄະແນນການບໍລິໂພກອາຫານ (FCS)						
ບໍ່ສາມາດຍອມຮັບໄດ້	65 (10.6)	43.1 (31.8-55.2)	ອ້າງອີງ		ອ້າງອີງ	
ສາມາດຍອມຮັບໄດ້	546 (89.4)	79.1 (75.5-82.3)	5.01 (2.95-8.59)	0.001	4.66 (2.63-8.38)	0.001
ຄວາມຫຼາກຫຼາຍຂອງການຜະລິດສະບຽງອາຫານ						
2 ກຸ່ມລົງມາ	181 (29.6)	68.5 (61.4-74.8)	ອ້າງອີງ		ອ້າງອີງ	
3 ເຖິງ 4 ກຸ່ມ	245 (40.1)	72.6 (66.7-77.8)	1.22 (0.80-1.86)	0.35	1.03 (0.67-1.91)	0.36
5 ກຸ່ມຂຶ້ນໄປ	185 (30.3)	85.4 (79.6-89.8)	2.69 (1.62-4.55)	0.001	2.33 (1.37-4.02)	0.01

ແຫຼ່ງຂໍ້ມູນ: ການສຳຫຼວດເຝົ້າລະວັງແຫ່ງຊາດດ້ານໂພຊະນາການ ຮອບ 2 ປີ 2023. ການຄິດໄລ່ຂອງຜູ້ວິເຄາະ.

ໝາຍເຫດ: [1] ປັບຕົວກັບ ພາກພື້ນ/ຂົງເຂດ ແລະ ການສຶກສາຂອງແມ່

ໂດຍລວມແລ້ວ, ການວິເຄາະທີ່ນຳໃຊ້ຫຼັກຖານ ຊີ້ໃຫ້ເຫັນວ່າ ຄວາມຫຼາກຫຼາຍໃນການຜະລິດສະບຽງອາຫານ ແລະ ການຄ້ຳປະກັນສະບຽງອາຫານຂອງຄົວເຮືອນ ມີການພົວພັນໃນທາງບວກກັບ ຄວາມຫຼາກຫຼາຍດ້ານອາຫານສຳລັບແມ່ຍິງ ແລະ ເດັກນ້ອຍ. ໃນການສຶກສານີ້, ອັດຕາສ່ວນຕ່ຳສຸດຂອງການໄດ້ຮັບ MDD ແລະ MDD-W ແມ່ນໃນບັນດາຄົວເຮືອນທີ່ມີຄະແນນການບໍລິໂພກອາຫານ ທີ່ບໍ່ສາມາດຍອມຮັບໄດ້. ຄວາມຫຼາກຫຼາຍດ້ານອາຫານທີ່ຫຼຸດລົງຂອງແມ່ຍິງ ແລະ ເດັກນ້ອຍ ທີ່ອາໄສຢູ່ໃນຄົວເຮືອນທີ່ບໍ່ມີການຄ້ຳປະກັນສະບຽງອາຫານ ອາດຈະແມ່ນຍ້ອນການບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການຕ່ຳ. ຂະນະດຽວກັນ, ອັດຕາສ່ວນສູງສຸດຂອງການໄດ້ຮັບ MDD ແລະ MDD-W ແມ່ນໃນບັນດາຄອບຄົວທີ່ຜະລິດອາຫານ 5 ກຸ່ມຂຶ້ນໄປ. ຄວາມຫຼາກຫຼາຍທາງດ້ານອາຫານຂອງແມ່ຍິງ ແລະ ເດັກນ້ອຍ ທີ່ເພີ່ມຂຶ້ນໃນຄົວເຮືອນເຫຼົ່ານີ້ ອາດຈະສະທ້ອນໃຫ້ເຫັນຄວາມເປັນຈິງທີ່ວ່າ ຄົວເຮືອນໃນ ສປປ ລາວ ສ່ວນໃຫຍ່ຍັງແມ່ນຊາວກະສິກອນແບບກຸ້ມຕົນເອງ ເປັນຫຼັກ ຫຼື ເປັນບາງສ່ວນ. ບັນດາຄົວເຮືອນດັ່ງກ່າວ ປູກພືດສະບຽງອາຫານ ແລະ ລ້ຽງສັດ ຫຼື ລ້ຽງປາ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕົນເອງ ແລະ ຄອບຄົວ. ຕາມທີ່ລະບຸໄວ້ໃນບັນດາເອກະສານທີ່ຜ່ານມາ ແລະ ຄວາມຊິນເຄີຍໂດຍທຳມະຊາດ ບັນດາຄົວເຮືອນເຫຼົ່ານີ້ມັກຈະບໍລິໂພກໃນສິ່ງທີ່ພວກເຂົາປູກເປັນຫຼັກ.

ຂໍ້ສະເໜີແນະດ້ານນະໂຍບາຍ

ອີງຕາມຜົນໄດ້ຮັບການຂອງການວິເຄາະ, ໄດ້ມີຂໍ້ສະເໜີແນະດັ່ງຕໍ່ໄປນີ້:

1) **ເພີ່ມທະວີການມີຄວາມພ້ອມ, ການເຂົ້າເຖິງ ແລະ ຄວາມສາມາດໃນການຊື້ ອາຫານທີ່ມີຄຸນຄ່າທາງໂພຊະນາການທີ່ຫຼາກຫຼາຍ.** ລັດຖະບານ ສປປ ລາວ ຄວນຊຸກຍູ້ໃຫ້ມີການກຳນົດລາຍການອາຫານທີ່ມີຄຸນຄ່າທາງໂພຊະນາການ ທີ່ຫາໄດ້ຢູ່ໃນທ້ອງຖິ່ນ ແລະ ມີລາຄາຖືກ - ລວມທັງ ພືດຕະກຸນຖົ່ວ, ໝາກໄມ້, ພືດຜັກ ແລະ ອາຫານທີ່ມາຈາກສັດ ພ້ອມທັງເຮັດໃຫ້ບັນດາອາຫານເຫຼົ່ານີ້ກາຍເປັນຈຸດສຸມທາງດ້ານນະໂຍບາຍ, ແຜນງານ ແລະ ຄູ່ມືແນະນຳແຫ່ງຊາດ ເພື່ອປິດຊ່ອງຫວ່າງດ້ານສານອາຫານ ຂອງແມ່ຍິງ ແລະ ເດັກນ້ອຍ. ພ້ອມທັງເພີ່ມຄວາມສາມາດໃນການເຂົ້າເຖິງ ແລະ ການຊື້ອາຫານທີ່ມີຄຸນຄ່າທາງໂພຊະນາການເຫຼົ່ານີ້, ເຊິ່ງເປັນສິ່ງສຳຄັນທີ່ສຸດການສ້າງແຮງຈູງໃຈ ເພື່ອຊຸກຍູ້ການຜະລິດ, ການແຈກຢາຍ ແລະ ການຂາຍຍ່ອຍ. ໃນນັ້ນ ລວມເຖິງການສະໜອງສິ່ງຈູງໃຈ ແລະ ເງິນອຸດໜູນ ເພື່ອເສີມຂະຫຍາຍການຜະລິດອາຫານທີ່ມີຢູ່ທ້ອງຖິ່ນໂດຍຜ່ານຫຼາຍຊ່ອງທາງ, ລວມທັງໂຄງການເຮັດສວນຄົວເຮືອນ. ສິ່ງເຫຼົ່ານີ້ ມີຄວາມສຳຄັນຫຼາຍຢູ່ເຂດຊົນນະບົດ ທີ່ປະຊາຊົນມີໂອກາດໃນການສ້າງລາຍຮັບ ແລະ ການເຂົ້າເຖິງຕະຫຼາດທີ່ຈຳກັດ. ສວນຄົວເຮືອນສາມາດຮັບປະກັນໃນການເຂົ້າເຖິງອາຫານປະເພດຕ່າງໆ ທີ່ນຳມາປະກອບເປັນອາຫານທີ່ດີຕໍ່ສຸຂະພາບສຳລັບແມ່ ແລະ ລູກຂອງພວກເຂົາ.

2) **ເພີ່ມປະສິດທິພາບລະບົບອາຫານ ເພື່ອການຜະລິດອາຫານທີ່ມີຄຸນຄ່າທາງໂພຊະນາການ.** ໃນຂະນະດຽວກັນກັບການເພີ່ມຄວາມພ້ອມຂອງພືດຜົນທີ່ມີຄຸນຄ່າທາງໂພຊະນາການ ແລະ ມີຫຼາກຫຼາຍຊະນິດ, ຈຶ່ງຈຳເປັນຕ້ອງໄດ້ມີການຊຸກຍູ້ຕາມຄວາມຕ້ອງການອາຫານເຫຼົ່ານີ້. ຄວາມຕ້ອງການອາດຈະເພີ່ມຂຶ້ນ ຕາມຄວາມມັກຂອງຜູ້ບໍລິໂພກ ສຳລັບອາຫານທີ່ຫຼາກຫຼາຍຂຶ້ນ ຫຼື ເມື່ອຜູ້ຜະລິດປ່ຽນຮູບແບບການບໍລິໂພກຂອງຕົນເອງ. ທັງສອງສະຖານະການນີ້ ແມ່ນຕ້ອງໃຫ້ມີການສະໜອງດ້ານການສຶກສາ/ຄວາມຮູ້ ແລະ ຂໍ້ມູນຂ່າວສານ ແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກ ກ່ຽວກັບໂພຊະນາການ ແລະ ຄວາມສຳຄັນຂອງອາຫານທີ່ມີຄວາມຫຼາກຫຼາຍ. ສິ່ງເຫຼົ່ານີ້ ສາມາດບັນລຸໄດ້ ໂດຍຜ່ານຫຼາຍຊ່ອງທາງ, ລວມທັງ ແຜນງານສົ່ງເສີມກະສິກຳ ແລະ ການລິເລີ່ມ ໃນການສ້າງຕະຫຼາດ ສຳລັບຄວາມຫຼາກຫຼາຍຂອງອາຫານທ້ອງຖິ່ນຢູ່ໃນຕົວເມືອງ ແລະ ຊົນນະບົດ. ສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງ ການສະໜອງ ແລະ ຄວາມຕ້ອງການອາຫານທີ່ຫຼາກຫຼາຍ ແລະ ມີຄຸນຄ່າທາງໂພຊະນາການ ເປັນກຸນແຈສຳຄັນໃນການບັນລຸເປົ້າໝາຍນີ້.

3) **ເພີ່ມທະວີການປ່ຽນແປງພຶດຕິກຳທາງສັງຄົມ:** ຄວນສົ່ງເສີມການສຶກສາດ້ານສຸຂະພາບ ແລະ ດ້ານໂພຊະນາການ ສຳລັບແມ່ ແລະ ຜູ້ດູແລເດັກນ້ອຍ, ໂດຍເນັ້ນໃສ່ພາກປະຕິບັດໃນການລ້ຽງດູທີ່ສະທ້ອນເຖິງວັດທະນະທຳ ຂອງທ້ອງຖິ່ນ ແລະ ການມີຄວາມພ້ອມດ້ານອາຫານ. ນອກຈາກນີ້, ຄວນແກ້ໄຂການຄະລຳອາຫານ ແລະ ມາດຕະຖານທາງສັງຄົມທີ່ບໍ່ເໝາະສົມຕໍ່ກັບໂພຊະນາການທີ່ດີທີ່ສຸດ ທີ່ເປັນອົງປະກອບທີ່ສຳຄັນຂອງບັນດາມາດຕະການດ້ານການປ່ຽນແປງພຶດຕິກຳທາງສັງຄົມ.

4) **ນຳໃຊ້ວິທີການສື່ສານຫຼາຍຊ່ອງທາງ (ສື່ສິ່ງພິມ, ອອກອາກາດ, ສື່ສັງຄົມ ແລະ ສື່ດິຈິຕອລ) ເພື່ອເຜີຍແຜ່ ຄຳແນະນຳກ່ຽວກັບພາກປະຕິບັດດ້ານໂພຊະນາການ ແລະ ການດູແລ ໃຫ້ແກ່ ແມ່ຍິງ, ເດັກຍິງ ແລະ ປະຊາຊົນ.** ການວິເຄາະໄດ້ຊີ້ໃຫ້ເຫັນວ່າ ລະດັບການສຶກສາຂອງແມ່ເປັນປັດໄຈທີ່ສຳຄັນຂອງການໄດ້ຮັບ MDD ແລະ MDD-W, ທີ່ສະແດງໃຫ້ເຫັນວ່າ ແມ່ທີ່ໄດ້ຮັບການສຶກສາອາດຈະມີຂໍ້ມູນຂ່າວສານຫຼາຍຂຶ້ນ ຫຼື ມີຄວາມເຂົ້າໃຈດີຂຶ້ນ ກ່ຽວກັບຄວາມສຳຄັນຂອງຄວາມຫຼາກຫຼາຍດ້ານອາຫານ ແລະ ຜົນສະທ້ອນຂອງໂພຊະນາການທີ່ບໍ່ໄດ້ດີ. ຄວນມີການຜັນຂະຫຍາຍແຜນດຳເນີນງານ ເພື່ອຮັບປະກັນວ່າເດັກຍິງໄດ້ເຂົ້າໂຮງຮຽນ ແລະ ສືບຕໍ່ຮຽນຈົນກວ່າຈະສຳເລັດການສຶກສາ. ການສ້າງຄວາມເຂັ້ມແຂງ ແລະ ໃຫ້ການສຶກສາ ແກ່ເດັກຍິງ ມີຜົນກະທົບໂດຍກົງຕໍ່ກັບການເລືອກອາຫານ ແລະ ພາກປະຕິບັດຂອງພວກເຂົາ. ນອກຈາກນັ້ນ, ຄວາມພະຍາຍາມໃນການສື່ສານ ຄວນຊຸກຍູ້ ແລະ ດຶງດູດການມີສ່ວນຮ່ວມຂອງພໍ່ ໃນການກະກຽມສະບຽງອາຫານ ແລະ ລ້ຽງດູລູກນ້ອຍເປັນປົກກະຕິ, ຈຶ່ງຈະຊ່ວຍຫຼຸດຜ່ອນຄວາມກົດດັນດ້ານເວລາຕໍ່ແມ່ຍິງ ແລະ ປະກອບສ່ວນຕໍ່ຄວາມສະເໝີພາບດ້ານບົດບາດຍິງ-ຊາຍ.

5) **ການລວມເອົາການສຶກສາດ້ານໂພຊະນາການເຂົ້າໃນຫຼັກສູດການສຶກສາ.** ການສຶກສາໄດ້ຊີ້ໃຫ້ເຫັນວ່າ ການສຶກສາຂອງແມ່ເປັນປັດໄຈສຳຄັນຂອງການໄດ້ຮັບ MDD ແລະ MDD-W. ແມ່ທີ່ໄດ້ຮັບການສຶກສາມີທ່າອ່ຽງທີ່ຈະມີຄວາມຮູ້ ແລະ ຄວາມເຂົ້າໃຈຫຼາຍຂຶ້ນ ກ່ຽວກັບໂພຊະນາການ ແລະ ການລ້ຽງດູເດັກນ້ອຍ. ພວກເຂົາອາດຈະຮັບຮູ້ເຖິງ ຄວາມສຳຄັນຂອງຄວາມຫຼາກຫຼາຍດ້ານອາຫານ ແລະ ຄວາມຖີ່ຂອງການບໍລິໂພກອາຫານ ໃນການ

ສະໜັບສະໜຸນການຈະເລີນເຕີບໂຕ ແລະ ພັດທະນາການຂອງເດັກນ້ອຍ, ຕະຫຼອດເຖິງຜົນສະທ້ອນຂອງການລ້ຽງດູທີ່ບໍ່ໄດ້ດີ. ດັ່ງນັ້ນ, ພວກເຂົາອາດຈະມີໂອກາດທີ່ຈະລ້ຽງດູລູກຕົນເອງ ໂດຍການບໍລິໂພກອາຫານທີ່ຫຼາກຫຼາຍ ແລະ ກິນຖີ່ຂຶ້ນ. ມາດຕະການທາງດ້ານການສຶກສາ, ໂດຍສະເພາະຢູ່ຂັ້ນຊຸມຊົນ, ອາດຈະເປັນທ່າແຮງໃນການປັບປຸງສະຖານະພາບດ້ານໂພຊະນາການຂອງເດັກນ້ອຍຢ່າງຫຼວງຫຼາຍ ໂດຍການສ້າງຄວາມເຂັ້ມແຂງໃຫ້ເດັກຍິງ ຜູ້ທີ່ຈະກາຍເປັນແມ່ໃນອະນາຄົດ ທີ່ໄດ້ຮັບການພັດທະນາຄວາມຮູ້ ແລະ ພາກປະຕິບັດດ້ານໂພຊະນາການ ພ້ອມທັງ ພຶດຕິກຳການເບິ່ງແຍງສຸຂະພາບທີ່ດີຂຶ້ນ.

6) **ຂະຫຍາຍການເຂົ້າເຖິງການໃຫ້ຄຳປຶກສາດ້ານໂພຊະນາການທີ່ມີຄຸນນະພາບ ແລະ ການສະໜັບສະໜຸນກ່ຽວກັບການລ້ຽງດູເດັກອ່ອນ ແລະ ພາກປະຕິບັດຄວາມຫຼາກຫຼາຍດ້ານອາຫານ ສຳລັບແມ່ຍິງ ແລະ ເດັກນ້ອຍ ໃນຊ່ວງກ່ອນ ແລະ ລະຫວ່າງການຖືພາ ຕະຫຼອດເຖິງໄລຍະລ້ຽງລູກດ້ວຍນ້ຳນົມແມ່.** ວຽກງານຢູ່ໃນຂັ້ນຊຸມຊົນມີຄວາມສຳຄັນຫຼາຍ ເພື່ອເພີ່ມການເຂົ້າເຖິງໃນການໃຫ້ຄຳປຶກສາ ແລະ ສະໜັບສະໜຸນການບໍລິການກ່ຽວກັບການລ້ຽງດູເດັກນ້ອຍ ແລະ ພາກປະຕິບັດຂອງຄວາມຫຼາກຫຼາຍດ້ານອາຫານ ແລະ ເພື່ອແກ້ໄຂຊ່ອງຫວ່າງຄວາມສະເໝີພາບ ໃນການຄຸ້ມຄອງບັນດາກຸ່ມກິດຈະກຳດ້ານໂພຊະນາການທີ່ຈຳເປັນ. ລັດຖະບານ ສປປ ລາວ ແລະ ຄູ່ຮ່ວມພັດທະນາຕ້ອງລົງທຶນໃສ່ການບັນຈຸ/ຈ້າງງານ, ຝຶກອົບຮົມ, ຕິດຕາມ ພ້ອມທັງ ປຸກລະດົມທີ່ປຶກສາ ແລະ ພະນັກງານສາທາລະນະສຸກຂັ້ນຊຸມຊົນເພື່ອໃຫ້ຄຳປຶກສາດ້ານໂພຊະນາການທີ່ມີຄຸນນະພາບ ແລະ ສະໜັບສະໜຸນການລ້ຽງດູເດັກນ້ອຍ ແລະ ຄວາມຫຼາກຫຼາຍດ້ານອາຫານແບບອົງກວ້າງ. ນອກຈາກນັ້ນ, ຄວນເພີ່ມຄວາມຮັບຮູ້ດ້ານອາຫານທີ່ມີຄຸນຄ່າທາງໂພຊະນາການ ແລະ ອາຫານທີ່ມີຢູ່ທ້ອງຖິ່ນທີ່ສາມາດຊ່ວຍປັບປຸງການຜະລິດ ແລະ ການບໍລິໂພກໄດ້.

7) **ກຳນົດສິດທິຂອງແມ່ຍິງ ແລະ ເດັກນ້ອຍ ໃນການບໍລິໂພກອາຫານທີ່ມີຄຸນຄ່າທາງໂພຊະນາການ ແລະ ປອດໄພ ເຊິ່ງເປັນບຸລິມະສິດໜຶ່ງຂອງ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 2026-2030 ແລະ ຮັບປະກັນການສະໜັບສະໜຸນດ້ານນະໂຍບາຍ ແລະ ນິຕິກຳທີ່ສອດຄ່ອງກັນ ໃນທົ່ວຂະແໜງການ ແລະ ລະບົບ.** ລັດຖະບານແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ ຄວນຍົກລະດັບການບໍລິໂພກອາຫານຂອງແມ່ຍິງ ແລະ ເດັກນ້ອຍ ເປັນບຸລິມະສິດໃນການພັດທະນາປະເທດ ແລະ ການຈັດສັນຊັບພະຍາກອນທາງດ້ານງົບປະມານໃຫ້ພຽງພໍກັບຄວາມຕ້ອງການ ແລະ ການລົງທຶນຂອງຂັ້ນກະຊວງ. ບັນດານະໂຍບາຍ, ນິຕິກຳ ແລະ ແຜນງານ ໃນທົ່ວລະບົບສະບຽງອາຫານ, ສຸຂະພາບ ແລະ ການປົກປ້ອງທາງສັງຄົມຕ້ອງສອດຄ່ອງກັນ, ໂດຍພິຈາລະນາເຖິງບົດບາດທີ່ກ່ຽວຂ້ອງກັນຂອງລະບົບເຫຼົ່ານີ້ ໃນການປັບປຸງການບໍລິໂພກອາຫານຂອງແມ່ຍິງ ແລະ ເດັກນ້ອຍ. ການປະສານງານທີ່ມີປະສິດທິຜົນເປັນສິ່ງຈຳເປັນໃນການກຳນົດ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນງານ ທີ່ຈະເສີມສ້າງເຊິ່ງກັນ ແລະ ກັນ.

8) **ດຳເນີນການຄົ້ນຄວ້າເພື່ອໃຫ້ມີຄວາມເຂົ້າໃຈບັນດາປັດໄຈ ທີ່ມີສ່ວນເຮັດໃຫ້ປະສົບຜົນສຳເລັດ ຫຼື ບໍ່ປະສົບຜົນສຳເລັດຂອງລະບົບ ໃນການປັບປຸງການບໍລິໂພກອາຫານຂອງແມ່ຍິງ ແລະ ເດັກນ້ອຍ.** ລັດຖະບານແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາຄວນສະໜອງທຶນເພື່ອສະໜັບສະໜຸນດ້ານການຄົ້ນຄວ້າ ເພື່ອແນ່ໃສ່ການລະບຸອຸປະສັກສະເພາະຂອງສະພາບການ ແລະ ອຳນວຍຄວາມສະດວກໃນການເຂົ້າເຖິງອາຫານ, ການບໍລິການ ແລະ ການປະຕິບັດດ້ານໂພຊະນາການຢ່າງພຽງພໍ ສຳລັບແມ່ຍິງ ແລະ ເດັກນ້ອຍ, ລວມທັງ ຂໍ້ມູນລະອຽດຂອງແມ່ ແລະ ບັນດາຜູ້ລ້ຽງດູເດັກເປັນຫຼັກ. ນອກຈາກນີ້, ການລົງທຶນເຂົ້າໃນການຄົ້ນຄວ້າມີຄວາມຈຳເປັນຢ່າງຍິ່ງ ເພື່ອລະບຸບັນດາປັດໄຈ, ຂະບວນການ ແລະ ນະວັດຕະກຳ ທີ່ເອື້ອອຳນວຍຕໍ່ການຈັດຕັ້ງປະຕິບັດແບບຫຼາຍລະບົບ ເພື່ອຮັບປະກັນອາຫານທີ່ມີຄຸນຄ່າທາງໂພຊະນາການ, ຄວາມປອດໄພ, ສາມາດຊື້ໄດ້ ຕາມຄວາມຕ້ອງການ ແລະ ຍືນຍົງ. ການຮຽນຮູ້ຈາກປະສົບການທີ່ບໍ່ປະສົບຜົນສຳເລັດ ແລະ ປະສົບຜົນສຳເລັດນັ້ນ ເປັນສິ່ງສຳຄັນຫຼາຍ ໃນການໃຫ້ຂໍ້ມູນຕໍ່ການຕັດສິນໃຈ ແລະ ການກຳນົດນະໂຍບາຍທີ່ມີປະສິດທິຜົນ.

ເອກະສານອ້າງອີງ

Dizon F, Josephson A, Raju D. Pathways to better nutrition in South Asia: Evidence on the effects of food and agricultural interventions. Global Food Security. 2021;28:100467. Available from: https://doi.org/10.1016/j.gfs.2020.100467

Ruel M, Alderman H. Nutrition-sensitive interventions and programmes: how can they help to accelerate progress in improving maternal and child nutrition? Lancet. 2013;382:536–51. Available from: https://doi.org/10.1016/S0140-6736(13)60843-0

Sibhatu KT, Qaim M. Meta-analysis of the association between production diversity, diets, and nutrition in smallholder farm households. Food Policy. 2018;77:1-18.

ມິຖຸນາ 2024

ໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ (NIPN) ແມ່ນການລິເລີ່ມສາກົນຂອງຄະນະກຳມາທິການສະຫະພາບເອີຣົບ (EU).

ເປົ້າໝາຍຂອງໂຄງການສ້າງຖານຂໍ້ມູນຂ່າວສານແຫ່ງຊາດດ້ານໂພຊະນາການ (NIPN) ແມ່ນເພື່ອສ້າງຄວາມອາດສາມາດໃຫ້ສະຖາບັນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອຄຸ້ມຄອງ ແລະ ວິເຄາະຂໍ້ມູນຂ່າວສານ ແລະ ຂໍ້ມູນຈາກທຸກຂະແໜງການ ທີ່ມີອິດທິພົນຕໍ່ໂພຊະນາການ, ຕິດຕາມຄວາມຄືບໜ້າ ແລະ ແຈ້ງດ້ານນະໂຍບາຍ ແລະ ຍຸດທະສາດໃຫ້ດີຂຶ້ນ.

ພັດທະນາບົດສະເໜີໂດຍສັງເຂບໂດຍ:

ທ່ານ ຄາຍ ເທເລີ, ທີ່ປຶກສາສາກົນ ວິເຄາະນະໂຍບາຍ – NIPN
ດຣ. ປານີ ຊະນະນິຄົມ, ທີ່ປຶກສາແຫ່ງຊາດ ວິເຄາະນະໂຍບາຍ – NIPN

ໂດຍການປະກອບສ່ວນຈາກ:
ທ່ານ ອູສະຫວັນ ທ່ຽງເທບວົງສາ, ຫົວໜ້າ ສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດ-ສັງຄົມ (ສຄນສ), ສະຖາບັນ ວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ (ສວສສຊ)
ທ່ານ ປອ. ວິໄລວອນ ພິມມະຈັນ, ຮອງຫົວໜ້າ ສຄນສ, ສວສສຊ
ທ່ານ ລາດຊະວົງ ບຸນສີພົມ, ຮອງຫົວໜ້າ ສຄນສ, ສວສສຊ
ທ່ານ ນາງ ລຸນ ທິບພະສອນ, ຮອງຫົວໜ້າພະແນກ, ສຄນສ, ສວສສຊ
ທ່ານ ນາງ ມະລິ ແສງຄຳຢອງ, ພະນັກງານວິຊາການ, ສຄນສ, ສວສສຊ

ຄວາມຮັບຜິດຊອບ

ສື່ສິ່ງພິມສະບັບນີ້ໄດ້ຮັບການຊ່ວຍເຫຼືອຈາກສະຫະພາບເອີຣົບ. ເນື້ອໃນຂອງການພິມຄັ້ງນີ້ແມ່ນຄວາມຮັບຜິດຊອບຂອງ ສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດ-ສັງຄົມ (ສຄນສ), ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ (ສວສສຊ), ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ແລະ ອົງການສະຫະປະຊາຊາດສຳລັບເດັກ ພຽງຜູ້ດຽວ ແລະ ບໍ່ສາມາດນຳໄປສະທ້ອນໃຫ້ເຫັນທັດສະນະຂອງສະຫະພາບເອີຣົບໄດ້.